ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການແຫ່ງຊາດ ເພື່ອຕ້ານ

ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ໜ່ວຍງານຂໍ້ມູນຕ້ານການຟອກເງິນ ເລກທີ 42 /ໜຕຟງ

ນະຄອນຫຼວງວຽງຈັນ, ວັນທີ 12 JAN 2016

# ຄຳແນະນຳ

## ວ່າດ້ວຍ ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນແກ່ການກໍ່ການຮ້າຍ

- ອີງຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມຂໍ້ຕົກລົງວ່າດ້ວຍ ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນແກ່ການກໍ່ການຮ້າຍ ສະບັບເລກທີ 13/ຄຕຟງ, ລົງວັນທີ 19 ຕຸລາ 2015.

### ຫົວໜ້າໜ່ວຍງານຂໍ້ມູນຕ້ານການຟອກເງິນ ອອກຄຳແນະນຳ:

**ມາດຕາ 1 ຈຸດປະສົງ**

ຈຸດປະສົງຂອງການອອກຄຳແນະນຳສະບັບນີ້ ເພື່ອຜັນຂະຫຍາຍ ມາດຕາ 6 ຂອງຂໍ້ຕົກລົງວ່າດ້ວຍ ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນແກ່ການກໍ່ການຮ້າຍ ເພື່ອເປັນບ່ອນອີງພື້ນຖານໃຫ້ແກ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ໃນການສ້າງລະບຽບການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນແກ່ການກໍ່ການຮ້າຍ ພາຍໃນຂອງຕົນ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ຂັ້ນຕອນການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນແກ່ການກໍ່ການຮ້າຍ**

ຂັ້ນຕອນການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນແກ່ການກໍ່ການຮ້າຍ ແມ່ນຂັ້ນຕອນການລາຍງານ ທີ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງສ້າງເປັນລະບຽບພາຍໃນຂອງຕົນເອງ ເພື່ອກຳນົດຮູບແບບ, ຂັ້ນຕອນ ຫຼື ວິທີການ ການລາຍງານທຸລະກຳດັ່ງກ່າວ ໄປຍັງສຳນັກງານຂໍ້ມູນຕ້ານການຟອກເງິນ.

ທຸກສາຂາ ແລະ ໜ່ວຍບໍລິການຕ່າງໆ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນແກ່ການກໍ່ການຮ້າຍ ຕໍ່ສຳນັກງານໃຫຍ່ຂອງຕົນ ຫຼັງຈາກນັ້ນ ໃຫ້ສຳນັກງານໃຫຍ່

ພິຈາລະນາຄົ້ນຄວ້າຂໍ້ມູນທີ່ກ່ຽວຂ້ອງຢ່າງພຽງພໍ ເພື່ອລາຍງານທຸລະກຳດັ່ງກ່າວ ໄປຍັງໜ່ວຍງານຂໍ້ມູນຕ້ານການຟອກເງິນ.

**ມາດຕາ 3 ຄວາມຮັບຜິດຊອບ**

ສະພາບໍລິຫານ, ຜູ້ອຳນວຍການໃຫຍ່, ຜູ້ອຳນວຍການດ້ານການເງິນ ແລະ ຜູ້ຈັດການ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງການສ້າງ ແລະ ຈັດຕັ້ງປະຕິບັດບັນດາ ນະໂຍບາຍ, ແຜນການ, ຂັ້ນຕອນ, ຫຼັກການ ແລະ ລະບຽບ ກ່ຽວກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃນຂອງຕົນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ກໍລະນີ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຫາກມີເງື່ອນໄຂພຽງພໍ ຕ້ອງສ້າງຕັ້ງພະແນກ ຫຼື ຂະແໜງການ ສະເພາະເພື່ອຮັບຜິດຊອບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ໃນສຳນັກງານໃຫຍ່ ປະກອບມີບຸກຄະລາກອນຢ່າງໜ້ອຍ 03 ທ່ານ ຂຶ້ນໄປ ແລະ ໃນລະດັບສາຂາ ໃຫ້ແຕ່ງຕັ້ງເປັນພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ປະກອບມີບຸກຄະລາກອນ 02 ທ່ານ ຂຶ້ນໄປ ດັ່ງນີ້:

1. ພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ປະຈຳສຳນັກງານໃຫຍ່ ຫຼື ເປັນພາສາອັງກິດວ່າ: Anti Money Laundering Compliance Officer "AMLCO" ຕ້ອງແມ່ນລະດັບຜູ້ບໍລິຫານ ຫຼື ພະນັກງານອາວຸໂສທີ່ມີຄຸນວຸດທິ;
2. ພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ປະຈຳສາຂາ ຫຼື ເປັນພາສາອັງກິດວ່າ: Branch Anti Money Laundering Officer "BAMLO" ຕ້ອງແມ່ນລະດັບຫົວໜ້າ ຫຼື ຮອງຫົວໜ້າສາຂາ ຫຼື ຮັກສາການຫົວໜ້າສາຂາ ກໍລະນີ ສາຂາຕ່າງປະເທດ ຕ້ອງລະດັບ ຜູ້ຈັດການ ຫຼື ຮອງຜູ້ຈັດການ ຫຼື ຮັກສາການຜູ້ຈັດການ.

ກໍລະນີ ຫາກຫົວໜ່ວຍທີ່ມີໜ້າທີ່ລາຍງານ ບໍ່ມີເງື່ອນໄຂພຽງພໍ ຕ້ອງແຕ່ງຕັ້ງພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ເພື່ອຮັບຜິດຊອບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປະກອບມີພະນັກງານເກັບກຳຂໍ້ມູນ ແລະ ລາຍງານ 02 ທ່ານ ຂຶ້ນໄປ.

ພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ໄດ້ຮັບການແຕ່ງຕັ້ງ ຕ້ອງເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍພາຍໃນຂອງຕົນ ທັງຈະຕ້ອງມີຄວາມຮັບຜິດຊອບພື້ນຖານຢ່າງໜ້ອຍຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 19 ວັກໜຶ່ງ ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຕາມການກຳນົດເພີ່ມເຕີມ ຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ.

**ມາດຕາ 4 ການປະກອບຂໍ້ມູນໃນແບບພິມ ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງປະກອບຂໍ້ມູນ ໃນແບບພິມລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໜ່ວຍງານຂໍ້ມູນຕ້ານການຟອກເງິນ ວາງອອກ ດັ່ງນີ້:

1. ໃຫ້ຕື່ມເຄື່ອງໝາຍ (X) ໃສ່ຫ້ອງທີ່ເຫັນວ່າເປັນຊື່ຂອງຕົນ ເພື່ອໃຫ້ຮູ້ວ່າເປັນນິຕິບຸກຄົນ ທີ່ນອນໃນຫົວໜ່ວຍທີ່ມີໜ້າທີ່ລາຍງານ ປະເພດໃດ ໃນເວລາລາຍງານ;

2. ໃຫ້ຕື່ມຂໍ້ມູນລະອຽດຂອງພະນັກງານເກັບກຳຂໍ້ມູນ ແລະ ລາຍງານ ພ້ອມທັງລາຍເຊັນຂອງຜູ້ອະນຸມັດ ຢູ່ໃນຂໍ້ໜຶ່ງໃຫຍ່ ນັບແຕ່ ຂໍ້ 1-9 ນ້ອຍ;
3. ກໍລະນີ ລູກຄ້າເປັນບຸກຄົນ ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບບຸກຄົນດັ່ງກ່າວ ທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ໃນ ຂໍ້ 2.1 ຂອງຂໍ້ສອງໃຫຍ່ ນັບແຕ່ ຂໍ້ 10-22 ນ້ອຍ;
4. ກໍລະນີ ລູກຄ້າເປັນນິຕິບຸກຄົນ ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບນິຕິບຸກຄົນດັ່ງກ່າວ ທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ຂໍ້ 2.2.1 ໃນ ຂໍ້ 2.2 ຂອງຂໍ້ສອງໃຫຍ່ ນັບແຕ່ ຂໍ້ 23-34 ນ້ອຍ;
5. ກໍລະນີ ເປັນບຸກຄົນທີ່ມາເຮັດທຸລະກຳແທນນິຕິບຸກຄົນ ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບບຸກຄົນດັ່ງກ່າວ ທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ ຂໍ້ 2.2 ໃນຂໍ້ 2.2.2 ຂອງຂໍ້ສອງໃຫຍ່ ນັບແຕ່ ຂໍ້ 35-48 ນ້ອຍ;
6. ກໍລະນີ ຜູ້ຮັບຜົນປະໂຫຍດຈາກປະກັນໄພ ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບບຸກຄົນດັ່ງກ່າວທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ຂໍ້ສາມໃຫຍ່ ນັບແຕ່ ຂໍ້ 49-52 ນ້ອຍ;
7. ໃຫ້ຕື່ມຂໍ້ມູນລາຍລະອຽດກ່ຽວກັບທຸລະກຳທີ່ຕົນສົງໄສ ໂດຍອະທິບາຍຫຍໍ້ລັກສະນະ ແລະ ເຫດຜົນ ທີ່ຕົນເຫັນວ່າມີການເຄື່ອນໄຫວ ຫຼື ພຶດຕິກຳ ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ໃນຂໍ້ສີ່ໃຫຍ່ ນັບແຕ່ ຂໍ້ 53-62 ນ້ອຍ ຊຶ່ງຈະຕ້ອງສ້າງເປັນບົດອະທິບາຍລະອຽດ ແລະ ຄັດຕິດມາພ້ອມທັງທຸກເອກະສານທີ່ກ່ຽວຂ້ອງກັບບົດລາຍງານທຸລະກຳດັ່ງກ່າວ;
8. ທຸກເອກະສານທີ່ກ່ຽວຂ້ອງກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກລາຍງານນັ້ນ ຕ້ອງຄັດຕິດມາພ້ອມການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທຸກຄັ້ງ. ກໍລະນີຈຳເປັນອາດຈະສົ່ງເປັນເອກະສານປະກອບເພີ່ມເຕີມບົດລາຍງານ ດັ່ງກ່າວກໍ່ໄດ້.

ທຸກຂໍ້ມູນກ່ຽວກັບທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງໜ່ວຍງານຂໍ້ມູນຕ້ານການຟອກເງິນ ເຫັນວ່າທີ່ມີສ່ວນພົວພັນ ຫຼື ກ່ຽວຂ້ອງ ກັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກລາຍງານນັ້ນ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງສະໜອງຂໍ້ມູນດັ່ງກ່າວ ຫຼື ລາຍງານເພີ່ມເຕີມ ໄປຍັງໜ່ວຍງານຂໍ້ມູນຕ້ານການຟອກເງິນ ທັນທີ.

**ມາດຕາ 5 ວິທີການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ໃນການລາຍງານ ທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ ສ້າງເປັນລະບຽບພາຍໃນຂອງຕົນເອງ ແຕ່ຕ້ອງມີການປະຕິບັດຕາມວິທີການຢ່າງໜ້ອຍ ດັ່ງນີ້:

1. ການນຳສົ່ງໃຫ້ນຳສົ່ງໃນຮູບແບບຂອງ ເອກະສານ ຫຼື ເອເລັກໂຕຣນິກ ຫຼື ຕາມວິທີການທີ່ໜ່ວຍງານຂໍ້ມູນຕ້ານການຟອກເງິນກຳນົດເພີ່ມເຕີມ;
2. ການນຳສົ່ງຕ້ອງສົ່ງໃຫ້ເຖິງມືພາກສ່ວນກ່ຽວຂ້ອງ ຂອງໜ່ວຍງານຂໍ້ມູນການຟອກເງິນ;

3. ບົດລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ທຸກເອກະສານທີ່ກ່ຽວຂ້ອງ ຕ້ອງມີການບັນຈຸ ຫຼື ຫຸ້ມຫໍ່ ຢ່າງດັກແນ່ ຊຶ່ງໃນເວລານຳສົ່ງຫ້າມບໍ່ໃຫ້ມີການເປີດ ຫຼື ແກະຊຸດເອກະສານຂອງບົດລາຍງານ ດັ່ງກ່າວ;
4. ໃຫ້ກຳນົດມາດຕະການໃນການຮັກສາຄວາມລັບ ຕໍ່ບຸກຄົນທີ່ເປັນຜູ້ນຳສົ່ງບົດລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ເອກະສານທີ່ກ່ຽວຂ້ອງ ທັງກ່ອນ ແລະ ຫຼັງ ເວລານຳສົ່ງ;
5. ກໍລະນີ ຫາກບົດລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ເອກະສານທີ່ກ່ຽວຂ້ອງ ມີການຕົກເຮ່ຍ ຫຼື ເສຍຫາຍ ໃນເວລານຳສົ່ງໄປຍັງໜ່ວຍງານຂໍ້ມູນຕ້ານການຟອກເງິນ ຫົວໜ່ວຍທີ່ມີໜ້າທີ່ລາຍງານນັ້ນ ຕ້ອງເປັນຜູ້ຮັບຜິດຊອບຕໍ່ຜົນກະທົບທີ່ເກີດຂຶ້ນ.
6. ປະຕິບັດຕາມວິທີການຕ່າງໆ ຕາມການກຳນົດເພີ່ມເຕີມ ຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ.

**ມາດຕາ 6 ການຈັດຕັ້ງປະຕິບັດ**

ມອບໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນຜູ້ຈັດຕັ້ງປະຕິບັດ ໂດຍການຜັນຂະຫຍາຍເນື້ອໃນຂອງຄຳແນະນຳສະບັບນີ້ ເຂົ້າເປັນສ່ວນໜຶ່ງ ຂອງນະໂຍບາຍ, ແຜນການ, ຂັ້ນຕອນ, ຫຼັກການ, ລະບົບ ແລະ ລະບຽບການພາຍໃນຂອງຕົນ ຢ່າງເຂັ້ມງວດ.

ພາກສ່ວນກ່ຽວຂ້ອງ ຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ ຈະຕ້ອງເປັນຜູ້ປະເມີນ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນ ວັກ 1 ຂອງມາດຕານີ້ ຢ່າງເປັນປະຈຳ ບົນພື້ນຖານການປະສານກັບພາກສ່ວນຂ້ອງ.

ກໍລະນີ ຈຳເປັນໜ່ວຍງານຂໍ້ມູນຕ້ານການຟອກເງິນ ຈະປັບປຸງແກ້ໄຂເພີ່ມເຕີມ ບາງມາດຕາ ຫຼື ເນື້ອໃນ ທັງໝົດຂອງຄຳແນະນຳສະບັບນີ້ ໃຫ້ແທດເໝາະກັບສະພາບການ ແລະ ເງື່ອນໄຂ ຂອງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 7 ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າໜ່ວຍງານຂໍ້ມູນຕ້ານການຟອກເງິນ,**

ທະນາຄານ ແຫ່ງ ສປປ ລາວ
ໜ່ວຍງານຂໍ້ມູນຕ້ານການຟອກເງິນ

ພັນທະບູນ ໄຊຍະເພັດ